# ການປະເມີນເພື່ອປັບປຸງການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ

## 1. ພາບລວມຂອງໂມດູນ

ໂມດູນນີ້ແມ່ນໃຫ້ຄາແນະນາກ່ຽວດັບການວັດ ແລະ ປະເມີນຜົນ ເພື່ອຊ່ວຍໃຫ້ຄູມີຄວາມຮັບຮູ້ກ່ຽວກັບວິທີການວັດ ແລະ ປະເມີນຜົນທີ່ມີຄວາມສອດຄ່ອງກັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່. ຄູຈະໄດ້ສຶກສາ ຫຼາຍໆວິທີການກ່ຽວກັບການວັດ ແລະ ປະເມີນຜົນເພື່ອປັບປຸງຜົນການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ. ຄໍາແນະນໍາຕ່າງໆ ແມ່ນໄດ້ປະກອບໃຫ້ນັກສຶກສາໃນນາມທີ່ຄູຝຶກຂັ້ນແຂວງ ( PA ຄູນິເທດ ຫຼື ພະນັກງານຂອງເມືອງໃນການໃຫ້ຄວາມຊ່ວຍເຫຼືອໃນດ້ານການສິດສອນແກ່ຄູສອນ) ຕໍ່ກັບວິທີການຊ່ວຍເຫຼືອຄູສອນເພື່ອຊ່ວຍໃຫ້ເຂົ້າໃຈ ແລະ ນາໃຊ້ວິທີດັ່ງກ່າວໂດຍຜ່ານການສັງເກດການສອນ. ຮອບຮຽນຂອງການຮຽນ, ການສອນເປັນຄູ່, ກຸ່ມການຮຽນຮູ້ຜ່ານທາງວັອດແອັບ ຫຼື ລະບົບຈັບຄູ່ / ຜູກສ່ຽວ.

## 2. ໂມດູນນີ້ໄດ້ກວມເອົາຂົງເຂດ ແລະ ມາດຕະຖານຕໍ່ໄປນີ້ຄື:

- **ຂົງເຂດ 1** : ຄວາມຮັບຮູ້ກ່ຽວກັບຜູ້ຮຽນ
- **ມາດຕະຖານ 1.1** : ຮູ້ ແລະ ເຂົ້າໃຈນັກຮຽນ
- **ຂົງເຂດ 3** : ຄວາມຮັບຮູ້ກ່ຽວກັບການສອນ
- **ມາດຕະຖານ 3.3** :ຮູ້ວິທີການປະເມີນ, ຖອດຖອນບົດຮຽນ ແລະ ລາຍງານຜົນການຮຽນຂອງນັກຮຽນ

## 3. ເພື່ອບັນລຸໄດ້ມາດຕະຖານດັ່ງກ່າວ ຄູສອນຜູ້ໜຶ່ງຕ້ອງ:

- ຮູ້ວິທີສັງເກດນັກຮຽນ ເພື່ອທີ່ຈະເຫັນໄດ້ວ່າ ເຂົາເຈົ້າກໍາລັງຮຽນຮູ້ ແລະ ມີຄວາມເຂົ້າໃຈ.
- ເຊື່ອໝັ້ນວ່າ ນັກຮຽນທັງໝົດສາມາດບັນລຸໄດ້ໃນລະດັບທີ່ສູງ.
- ຮູ້ວ່າ ເວລາໃດທີ່ຈະນໍາໃຊ້ການປະເມີນເພື່ອປັບປຸງການຮຽນ ແລະ ຈະນໍາໃຊ້ແນວໃດ.
- ຮູ້ວ່າ ເວລາໃດທີ່ຈະນໍາໃຊ້ການປະເມີນເພື່ອສະຫຼຸບຜົນການຮຽນ ແລະ ຈະນໍາໃຊ້ແນວໃດ.
- ຮູ້ວິທີການຖອດຖອນບົດຮຽນ ເພື່ອຊ່ວຍໃຫ້ຜູ້ຮຽນໄດ້ຮຽນຮູ້
- ຮູ້ວິທີການລາຍງານກ່ຽວກັບການຮຽນຮູ້ນັກຮຽນ.

## 4. ມາດຕະຖານການສອນຂອງຄູຊັ້ນປະຖົມສຶກສາ

### 4.1 ການສອນທີ່ມີປະສິດທິພາບ

#### 1. ຄວາມຮູ້ກ່ຽວກັບຜູ້ຮຽນ

- ຮູ້ ແລະ ເຂົ້າໃຈຜູ້ຮຽນ
- ຮູ້ ວ່າຜູ້ຮຽນ ຮຽນຄືແນວໃດ
- ຮູ້ສ້າງບັນຍາກາດການຮຽນ ທີ່ມີການສະໜັບສະໜູນການຮຽນ ແລະ ມີຄວາມປອດໄພ

2. **ຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ**
   - ຮູ້ເນື້ອໃນລາຍວິຊາ
   - ຮູ້ຫຼັກສູດສາມັນສຶກສາ
3. **ຄວາມຮູ້ກ່ຽວກັບການສອນ**
   - ຮູ້ວາງແຜນ ແລະ ປະຕິບັດການຮຽນ-ການສອນຢ່າງມີປະສິດທິພາບເຮັດຄື ແນວໃດ
   - ຮູ້ວ່າຈະສອນເນື້ອໃນບົດຮຽນຄືແນວໃດ
   - ຮູ້ວ່າຈະປະເມີນຄືແນວໃດ, ໃຫ້ການຖອດຖອນຄືແນວໃດ ແລະ ຮູ້ລາຍງານກ່ຽວ ກັບການຮຽນຂອງຜູ້ຮຽນຄືແນວໃດ
4. **ຄວາມຮັບຜິດຊອບ ທາງດ້ານວິຊາຊີບຄູ**
   - ການສະແດງອອກເຖິງຄວາມເອົາໃຈໃສ່ຕໍ່ການຮຽນຮູ້ທາງດ້ານວິຊາຊີບ
   - ການປະຕິບັດຈັນຍາບັນຄູ
   - ຊຸກຍູ້ວຽກງານວິຊາຊີບຄູຮ່ວມກັບເພື່ອນຮ່ວມງານຜູ້ປົກຄອງຜູ້ຮຽນ ຊຸມຊົນ
5. **ລະດັບຂອງຄວາມຊໍານານ**
   - ຄູຈົບໃໝ່
   - ຄູມີທັກສະ
   - ຄູມີຄວາມສາມາດສູງ
   - ຄູມີຄວາມເປັນຜູ້ນໍາ

**ຄູຈົບໃໝ່** : ໂດຍເນັ້ນໃສ່ຄູຈົບໃໝ່ໃຫ້ມີຄວາມຮູ້ທີ່ຕ້ອງການ ແລະ ຄຸນຄ່າຂອງຄູເພື່ອກາຍເປັນຄູສອນທີ່ມີ ປະສິດທິພາບ.

**ຄູມີທັກສະ**: ໂດຍເນັ້ນໃສ່ຄູທີ່ມີທັກສະ ໃນການນໍາໃຊ້ຄວາມຮູ້ເພື່ອພັດທະນາທັກສະຕ່າງໆສໍາລັບການສອນໃນ ຫ້ອງຮຽນ.

**ຄູມີຄວາມສາມາດສູງ**: ໂດຍເນັ້ນໃສ່ການນໍາໃຊ້ຄວາມຮູ້ຢ່າງສະໝໍ່າສະເໝີເພື່ອຝຶກຊ້ອມທັກສະການສອນໃນຫ້ອງ ຮຽນ.

**ຄູມີຄວາມເປັນຜູ້ນໍາ** : ໂດຍເນັ້ນໃສ່ການນໍາໃຊ້ຄວາມຮູ້ເພື່ອຊ່ວຍເຫຼືອຄູສອນຜູ້ອື່ນໆການພັດທະນາທັກສະການ ສອນທີ່ນາໃຊ້ໃນຫ້ອງຮຽນ.

6. **ພາກສະເໜີ**

**6.1 ການວັດ ແລະ ປະເມີນຜົນແມ່ນຫຍັງ ?**

ການວັດ ແລະ ປະເມີນຜົນແມ່ນຂະບວນຂອງການວັດ, ປະເມີນຜົນ ແລະ ການເກັບກາ ຂໍ້ມູນຂະບວນການຮຽນຮູ້ຂອງນັກຮຽນ, ຄວາມຕ້ອງການ ແລະ ທັກສະທີ່ໄດ້ຮັບ. ການວັດ ແລະ ປະເມີນຜົນມີຢູ່ສອງຮູບແບບຄື: ການປະເມີນຜົນເພື່ອປັບປຸງການຮຽນ ແລະ ການປະ ເມີນຜົນເພື່ອສະຫຼຸບຜົນການຮຽນ ເຊິ່ງຫຼັກສູດສະບັບປັບປຸງໃໝ່ໄດ້ປະສົມປະສານເອົາສອງ ຮູບແບບນີ້ເຂົ້າກັນ.

ການປະເມີນຜົນເພື່ອປັບປຸງການຮຽນຈະປະຕິບັດໃນຂະນະທີ່ກໍາລັງດໍາເນີນການສອນ ເພື່ອຊ່ວຍໃຫ້ຄູສອນສາມາດບອກໄດ້ ແລະ ລະບຸໄດ້ເຖິງຂໍ້ຫຍຸ້ງຍາກຕ່າງໆທີ່ນັກຮຽນໄດ້

ປະສົບພົບພໍ້ໃນເວລາປະຕິບັດກິດຈະກຳ ແລະ ຮູ້ໄດ້ວ່ານັກຮຽນຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມອັນໃດອີກ ເພື່ອຮັບປະກັນວ່ານັກຮຽນສາມາດບັນລຸໄດ້ຕາມຈຸດປະສົງຂອງການຮຽນ.

ການປະເມີນເພື່ອສະຫຼຸບຜົນການຮຽນຈະປະຕິບັດໃນຕອນທ້າຍຂອງທຸກໆບົດຮຽນ ຫຼື ຕອນທ້າຍຂອງຊຸດບົດຮຽນໃດໜຶ່ງ ເພື່ອກວດເບິ່ງວ່ານັກຮຽນສາມາດບັນລຸຕາມຈຸດປະສົງຂອງບົດສອນໄດ້ ຫຼື ບໍ.

**6.2 ເປັນຫຍັງການວັດ ແລະ ປະເມີນຜົນຈຶ່ງມີຄວາມສຳຄັນ ?**

ການວັດ ແລະ ປະເມີນຜົນເປັນພາກທີ່ສຳຄັນ ເຊິ່ງມັນໄດ້ຊ່ວຍໃຫ້ຄູສອນຮູ້ໄດ້ວ່າ ເປົ້າໝາຍການສຶກສາ ແລະ ຈຸດປະສົງດັ່ງກ່າວນັ້ນສາມາດບັນລຸໄດ້ ຫຼື ບໍ. ການວັດ ແລະ ການປະເມີນຜົນໄດ້ມີສະທ້ອນເຖິງການຕັດສິນໃຈກ່ຽວກັບຂັ້ນຮຽນ, ການເລື່ອນຊັ້ນເລື່ອນຂັ້ນ. ຄວາມຕ້ອງການໃນການຮຽນຮູ້ ແລະ ຄຸນະພາບຂອງການສອນ ພ້ອມທັງຄຸນະພາບຂອງຫຼັກສູດ. ການວັດ ແລະ ປະເມີນຜົນໄດ້ຊ່ວຍໃຫ້ພວກເຮົາໄດ້ຕັ້ງຄຳຖາມ ຖາມຕົນເອງດັ່ງຕໍ່ໄປນີ້:

- ພວກເຮົາກຳລັງສອນສິ່ງທີ່ພວກເຮົາຄິດວ່າ ພວກເຮົາກຳລັງສອນຢູ່ ຫຼື ບໍ ?
- ນັກຮຽນກຳລັງຮຽນຮູ້ສິ່ງທີ່ພວກເຂົາຄວນຈະຮຽນຮູ້ ຫຼື ບໍ ?
- ມີວິທີການສອນລາຍວິຊາໃດໜຶ່ງທີ່ດີກວ່າບໍ ເຊິ່ງເປັນວິທີທີ່ສົ່ງເສີມການຮຽນຮູ້ທີ່ດີກວ່າ ?

**6.3 ການວັດ ແລະ ປະເມີນຜົນຖືກປະຍຸກເຂົ້າໃນຫຼັກສູດປະຖົມສຶກສາສະບັບປັບປຸງໃໝ່ຄືແນວໃດ ?**

ຮູບແບບການວັດ ແລະ ປະເມີນຜົນໄດ້ມີການປັບປຸງ ແລະ ພັດທະນາຂຶ້ນ ເພື່ອໃຫ້ສອດຄ່ອງກັບຫຼັກສູດສະບັບປັບປຸງໃໝ່. ຂໍ້ມູນຫຼາຍໆຢ່າງໄດ້ປະກອບເຂົ້າໃນປຶ້ມຄູ່ມືຄູເພື່ອເປັນຂໍ້ມູນໃຫ້ແກ່ຄູສອນວ່າເວລາໃດທີ່ຈະນຳໃຊ້ການປະເມີນເພື່ອປັບປຸງການຮຽນ ແລະ ປະເມີນເພື່ອສະຫຼຸບຜົນການຮຽນ ແລະ ຈະເຮັດແນວໃດ.

ທຸກໆບົດຮຽນປະກອບມີການປະເມີນແບບຮູບຮີກ ເຊິ່ງ ໄດ້ອະທິບາຍໄວ້ ແລະ ເຊື່ອມໂຍງກັບຈຸດປະສົງຂອງບົດຮຽນ, ຄູສອນນາໃຊ້ການປະເມີນແບບຣູກຣິກໃນຂັ້ນຕອນການຝຶກປະຕິບັດ ແລະ ນາໃຊ້ທັງນີ້ກໍເພື່ອປະເມີນວ່າ ນັກຮຽນສາມາດນາໃຊ້ຄວາມຮູ້ໃໝ່ໆ ແລະ ທັກສະທີ່ໄດ້ຮັບໃນບົດຮຽນໄດ້ດີພຽງໃດ. ຄະແນນຣູກຣິກຂອງນັກຮຽນໄດ້ປ່ຽນມາເປັນຄະແນນປະຈຳເດືອນແທນການສອບເສັງດ້ວຍເຈ້ຍ.

ໃນທຸກໆບົດສອນໃນປຶ້ມຄູ່ມືຄູປະກອບມີການວັດ ແລະ ປະເມີນຜົນ ແລະ ກ່ອງຂໍ້ຄວາມກ່ຽວກັບການວັດປະເມີນ ທີ່ຊີ້ແຈງວ່າ ຄູສອນຈະໄດ້ດຳເນີນການປະເມີນເພື່ອປັບປຸງການຮຽນ ແລະ ເພື່ອສະຫຼຸບຜົນການຮຽນເມື່ອໃດ.

| ຄະແນນ | ນັກຮຽນສາມາດຖາມ ແລະ ຕອບຄຳຖາມ<br>What’s your name ? ( ເຈົ້າຊື່ຫຍັງ ) |
|---|---|
| 3 | ສາມາດຖາມ ແລະ ຕອບຄຳຖາມ<br>What’s your name ? ( ເຈົ້າຊື່ຫຍັງ ) ຢ່າງ<br>ລ່ຽນໄຫຼ<br>ແລະ ລະອຽດ |

| | |
|---|---|
| 2 | ສາມາດຖາມ ແລະ ຕອບຄຳຖາມ What's your name ? ມີການຄ້າງຄາ ແລະ ມີຄວາມຜິດໜ້ອຍໜຶ່ງ. |
| 1 | ສາມາດຖາມ ແລະ ຕອບຄຳຖາມ What's your name ? ໃນເວລາທີ່ໄດ້ຮັບ ຄວາມຊ່ວຍເຫຼືອຈາກຄູ. |

**ຕົວຢ່າງເການຮູບຮົກວິຊາ ພາສາອັງກິດ**

**ຂັ້ນ ປ 3. ບົດທີ 1 lesson 1**

**ການວັດ ແລະ ປະເມີນຜົນ**

ນັກຮຽນສາມາດຈື່ພາສາທີ່ໃຊ້ໃນຫ້ອງຮຽນໄດ້ບໍ? ໃຫ້ນັກຮຽນແຕ່ລະຄົນຝຶກພາສາທີ່ໃຊ້ໃນຫ້ອງຮຽນເຫຼົ່ານັ້ນ ແລະ

ຝຶກພາສາທີ່ໃຊ້ໃນຫ້ອງຮຽນດັ່ງກ່າວພ້ອມກັບສະແດງທ່າທາງປະກອບ

ຕົວຢ່າງຂອງການປະເມີນເພື່ອປັບປຸງ
ແລະ ກ່ອງຂໍ້ຄວາມ
ກ່ຽວກັບການວັດການປະເມີນ
( ພາສາອັງກິດ, ບົດທີ 1, ຂັ້ນ ປ 3 )

**ການວັດ ແລະ ປະເມີນຜົນ**

ປະເມີນຄວາມສາມາດຂອງນັກຮຽນໃນການຖາມ ແລະ ຕອບຄຳຖາມ

What's your name ? ( ເຈົ້າຊື່ຫຍັງ )

ໂດຍການໃຫ້ຄະແນນຈາກຂັ້ນຕອນທຳອິດຂອງບົດຮຽນ

ຕົວຢ່າງຂອງການປະເມີນເພື່ອສະຫຼຸບ
ການຮຽນ ແລະ ກ່ອງຂໍ້ຄວາມ
ກ່ຽວກັບການວັດການປະເມີນ
( ພາສາອັງກິດ, ບົດທີ 2, ຂັ້ນ ປ 3 )

## 7. ວິທີຊ່ວຍເຫຼືອຄູສອນ

ການຊ່ວຍເຫຼືອຄູສອນຢ່າງສະໝ່ຳສະເໝີເປັນສິ່ງສາຄັນເພີ່ມສ້າງທັກສະໃໝ່ໆໃນການສອນຂອງເຂົາເຈົ້າ ແລະ ເພື່ອຊຸກຍູ້ໃຫ້ພວກເຂົາທົດລອງນຳໃຊ້ທັກສະໃໝ່ໆດັ່ງກ່າວນັ້ນ ແລ້ວເຮັດການສະທ້ອນຄືນຕໍ່ກັບປະສົບການຂອງຕົນ.ການຊ່ວຍເຫຼືອສາມາດເຮັດໄດ້ຜ່ານຮູບແບບໃດໜຶ່ງຂອງ 5 ຮູບແບບການຮຽນຮູ້ຈາກໝູ່ເພື່ອນຄື:

1. **ຮອບວຽນຂອງການຮຽນ**
   ( ນຳພາໂດຍ ຄູຝຶກຂັ້ນແຂວງ / ຜູ້ອຳນວຍການ )
2. **ການສັງເກດການສອນ**
   ( ນຳພາໂດຍ ຄູຝຶກຂັ້ນແຂວງ / ຜູ້ອຳນວຍການ )
3. **ການສອນເປັນຄູ່**
   ( ນຳພາໂດຍ ຄູຝຶກຂັ້ນແຂວງ / ຜູ້ອຳນວຍການ )
4. **ການຮຽນຮູ້ຜ່ານທາງກຸ່ມວັອດແອັບ (WhatsApp)**
   ( ນຳພາໂດຍ ຄູຝຶກຂັ້ນແຂວງ / ຜູ້ອຳນວຍການ )

5. **ລະບົບຈັບຄູ່ / ຜູກສ່ຽວ**

( ຄູສອນເປັນຜູ້ນຳພາ )

ຈະເປັນຮູບແບບໃດໜຶ່ງກໍຕາມ ຫຼື ຫຼາຍໆຮູບແບບທີ່ທ່ານນຳໃຊ້ກັບຄູສອນ, ສິ່ງສຳຄັນແມ່ນມັນໄດ້ຊ່ວຍເຫຼືອຄູສອນໃນການສະທ້ອນຄືນຕໍ່ກັບການສິດສອນຂອງຕົນ, ຮຽນຮູ້ວິທີການສອນທີ່ໃໝ່ໆ ແລະ ຊຸກຍູ້ໃຫ້ຄູສອນນຳໄປທົດລອງນຳໃຊ້ວິທີການດັ່ງກ່າວ. ລາຍລະອຽດບາດກ້າວຕ່າງໆໃນການຊ່ວຍເຫຼືອຄູສອນໃນຮູບແບບໃດໜຶ່ງຂອງ 5 ຮູບແບບການຮຽນຮູ້ຈາກເພື່ອນຄື:

➢ **ສັງເກດການສອນ**

- ການສົນທະນາກ່ອນການສັງເກດການສອນ > ຖາມຄຳຖາມສະທ້ອນຄືນກັບຄູສອນ.
- ສັງເກດການສອນຂອງຄູ > ຊີ້ແຈງແນວທາງການປະຕິບັດທີ່ດີ / ຈຸດທີ່ຕ້ອງປັບປຸງໃຫ້ດີຂຶ້ນ, ເບິ່ງພຶດຕິກຳການສອນເພື່ອເປັນຂໍ້ມູນອ້າງອີງ.
- ການສົນທະນາພາຍຫຼັງການສັງເກດ > ອະທິບາຍ / ສາທິດ ວິທີການສອນ 2-3 ວິທີໃຫ້ແກ່ຄູສອນ ເຊິ່ງເປັນວິທີສະແດງໃຫ້ເຫັນເຖິງຈຸດທີ່ຕ້ອງປັບປຸງໃຫ້ດີຂຶ້ນ.

➢ **ການສອນເປັນຄູ່**

- ການວາງແຜນຮ່ວມກັນ > ຖາມຄຳຖາມສະທ້ອນຄືນກັບຄູສອນ.
- ການສອນເປັນຄູ່ > ສາທິດວິທີການສອນ 2-3 ວິທີໃຫ້ແກ່ຄູສອນ ເຊິ່ງເປັນວິທີທີ່ສະແດງໃຫ້ເຫັນເຖິງຈຸດທີ່ຕ້ອງປັບປຸງໃຫ້ດີຂຶ້ນ.
- ການສັງລວມຄືນກ່ຽວກັບການສອນເປັນຄູ່ > ຊ່ວຍເຫຼືອຄູສອນໃຫ້ສະທ້ອນຄືນຕໍ່ກັບ 2-3 ວິທີການສອນທີ່ໄດ້ສາທິດໃນຂັ້ນຕອນກ່ອນໜ້ານີ້.

➢ **ຮອບວຽນຂອງການຮຽນ**

- ປະເມີນ > ຊ່ວຍເຫຼືອຄູສອນໃນການສົນທະນາກ່ຽວກັບປະສົບການຂອງຕົນຕໍ່ກັບການທົດລອງນຳໃຊ້ວິທີການສອນຈາກຮອບວຽນຂອງການຮຽນທີ່ຜ່ານມາ.
- ສະທ້ອນຄືນ > ຖາມຄຳຖາມສະທ້ອນຄືນກັບຄູສອນ
- ຮຽນຮູ້ > ອະທິບາຍ / ສາທິດວິທີການສອນທີ່ແຕກຕ່າງກັນໃຫ້ແກ່ຄູສອນ.
- ວາງແຜນ > ຊຸກຍູ້ຄູສອນໃຫ້ເລືອກເອົາວິທີການສອນ 2-3 ວິທີ. ຊ່ວຍເຫຼືອຄູສອນໃນການວາງແຜນ ເພື່ອທົດລອງນຳໃຊ້ວິທີການດັ່ງກ່າວ.

➢ **ລະບົບຈັບຄູ່ / ຜູກສ່ຽວ**

- ຊຸກຍູ້ຄູສອນໃນການແລກປ່ຽນສິ່ງທີ່ຕົນໄດ້ຮຽນຮູ້ກ່ຽວກັບການຄຸ້ມຄອງພຶດຕິກຳຂອງນັກຮຽນ ໂດຍຜ່ານກິດຈະກຳການຮຽນຮູ້ຈາກເພື່ອນກັບຄູທີ່ຜູກສ່ຽວຂອງຕົນ.

➢ **ການຮຽນຮູ້ຜ່ານທາງກຸ່ມວ໊ອດແອັບ ( WhatsApp )**

- ສົ່ງຂໍ້ຄວາມທາງວ໊ອດແອັບ ( **WhatsApp** ) ປະຈຳອາທິດຫາຄູສອນຕະຫຼອດເວລາໃນ 6 ອາທິດ.

## 7.ຄຳຖາມສະທ້ອນຄືນ

ຖາມຄຳຖາມລຸ່ມນີ້ກັບຄູສອນ ໃນຕອນຕົ້ນຂອງກິດຈະກຳການຮຽນຮູ້ຈາກເພື່ອນເພື່ອໃຫ້ຄູສອນໄດ້ຄິດກ່ຽວກັບປະສົບການທີ່ຜ່ານມາຂອງຕົນຕໍ່ກັບການວັດ ແລະ ປະເມີນຜົນ ແລະ ເປັນຫຍັງການວັດ ແລະ ປະເມີນຜົນຈຶ່ງມີຄວາມສຳຄັນ.

- **ການວັດ ແລະ ປະເມີນຜົນແມ່ນຫຍັງ ?**
- **ເປັນຫຍັງການວັດ ແລະ ປະເມີນຜົນຈຶ່ງມີຄວາມສຳຄັນ ?**
- **ການວັດ ແລະ ປະເມີນຜົນຖືກປະຍຸກເຂົ້າໃນຫຼັກສູດປະຖົມສຶກສາສະບັບປັບປຸງໃໝ່ຄືແນວໃດ ?**

## 8.ພຶດຕິກຳການສອນ

ຖ້ານັກສຶກສາກຳລັງເຮັດການສັງເກດການສອນ ແມ່ນໃຫ້ອີງໃສ່ຕາຕະລາງລຸ່ມນີ້ໃນຂະນະທີ່ດຳເນີນການສັງເກດການສອນຂອງຄູສອນ ເພື່ອຊ່ວຍເຫຼືອນັກສຶກສາໃນການຊີ້ແຈງວ່າຕົວຢ່າງຂອງແນວທາງການປະຕິບັດທີ່ດີ ແລະ ຈຸດທີ່ຕ້ອງປັບປຸງເຊິ່ງນັກສຶກສາສັງເກດໄດ້ກ່ຽວກັບການວັດ ແລະ ປະເມີນຜົນມີຄືແນວໃດ.

| **ຂໍ້ຜິດພາດໃນເວລາດຳເນີນການວັດ ແລະ ປະເມີນຜົນ** | **ວິທີການປະຕິບັດທີ່ດີ** |
|---|---|
| ຄູ**ສອນນຳໃຊ້ຍຸດທະວິທີ / ວິທີການລຸ່ມນີ້ ເພື່ອດຳເນີນການປະເມີນຜົນເພື່ອປັບປຸງການຮຽນ** | |
| ບໍ່ໄດ້ຕັ້ງຄຳຖາມ ຖາມນັກຮຽນແຕ່ຕອນຕົ້ນຂອງບົດຮຽນເພື່ອກວດເບິ່ງວ່ານັກຮຽນຮູ້ຫຍັງແດ່ແລ້ວກ່ຽວກັບຫົວຂໍ້ຂອງບົດຮຽນ. | ນຳໃຊ້ການຕັ້ງຄຳຖາມໃນຕອນຕົ້ນຂອງບົດຮຽນເພື່ອກວດເບິ່ງວ່ານັກຮຽນຮູ້ຫຍັງແດ່ແລ້ວກ່ຽວກັບຫົວຂໍ້ຂອງບົດຮຽນ. |
| ບໍ່ໄດ້ຕິດຕາມນັກຮຽນໃນເວລາເຮັດກິດຈະກຳ ແລະ ບໍ່ໄດ້ໃຫ້ການຊ່ວຍເຫຼືອນັກຮຽນຜູ້ທີ່ມີບັນຫາ ( ຜູ້ທີ່ຍັງບໍ່ທັນເຂົ້າໃຈ ) | ຕິດຕາມນັກຮຽນໝົດທຸກຄົນໃນເວລາເຮັດກິດຈະກຳພ້ອມທັງຮັບປະກັນວ່າຕົນເອງໄດ້ຢືນໃນໄລຍະຫ່າງທີ່ເໝາະສົມເພື່ອທີ່ສາມາດໄດ້ຍິນສິ່ງທີ່ນັກຮຽນສົນທະນາ ແລະ ເຫັນສິ່ງທີ່ພວກເຂົາກຳລັງເຮັດ, ໃຫ້ການຊ່ວຍເຫຼືອນັກຮຽນຖ້າຈຳເປັນ |
| ຢືນຫ່າງຈາກນັກຮຽນຫຼາຍເກີນໄປໃນຂະນະທີ່ຕິດຕາມເພື່ອທີ່ຈະສາມາດໄດ້ຍິນສິ່ງທີ່ນັກຮຽນກຳລັງເວົ້າ ( ສົນທະນາ ) ແລະ ເຫັນໄດ້ສິ່ງທີ່ພວກເຂົາກຳລັງເຮັດ. | |
| ບໍ່ໄດ້ກວດຄືນຄວາມເຂົ້າໃຈຂອງນັກຮຽນຕໍ່ກັບຄຳແນະນຳ. | ຕັ້ງຄຳຖາມຖາມນັກຮຽນ ເພື່ອກວດຄືນຄວາມເຂົ້າໃຈຂອງພວກເຂົາຕໍ່ກັບຄຳແນະນຳ. |
| ບໍ່ໄດ້ຕັ້ງຄຳຖາມເພື່ອຮັບຮູ້ ແລະ ເຂົ້າໃຈເຖິງຂະບວນການຄົ້ນຄິດຂອງນັກຮຽນ | ຕັ້ງຄຳຖາມຖາມນັກຮຽນ ເພື່ອຮັບຮູ້ ແລະ ເຂົ້າໃຈເຖິງຂະບວນການຄົ້ນຄິດຂອງນັກຮຽນ. |
| ບໍ່ມີໂອກາດຊຸກຍູ້ນັກຮຽນໃຫ້ເຮັດການສະທ້ອນຄືນການຮຽນຮູ້ຂອງຕົນ | ຊອກໂອກາດຊຸກຍູ້ນັກຮຽນໃຫ້ເຮັດການສະທ້ອນຄືນການຮຽນຮູ້ຂອງຕົນ |
| ບໍ່ໄດ້ເປີດໂອກາດໃຫ້ນັກຮຽນປະເມີນຜົນງານເຊິ່ງ ກັນ ແລະ ກັນ. | ຊອກໂອກາດທີ່ເໝາະສົມໃຫ້ນັກຮຽນປະເມີນຜົນງານ ເຊິ່ງ ກັນ ແລະ ກັນ. |

| ຄູສອນນຳໃຊ້ຍຸດທະວິທີ / ວິທີການລຸ່ມນີ້ ເພື່ອດຳເນີນການປະເມີນຜົນເພື່ອສະຫຼຸບຜົນການຮຽນ | |
|---|---|
| ບໍ່ມີຄວາມກຽມພ້ອມໃນການວັດ ແລະ ປະເມີນຜົນ | ມີການວາງແຜນການວັດ ແລະ ປະເມີນຜົນກ່ອນການສອນ ( ເຊັ່ນ: ອ່ານເກນຮູບຣິກ, ກຳນົດກຸ່ມນັກຮຽນເປົ້າໝາຍເພື່ອປະເມີນ. ສຳເລັດການຕື່ມຂໍ້ມູນໃສ່ພາກທີ // ຂອງຮ່າງບົດສອນ ). |
| ບໍ່ມີການກຳນົດ ( ການແນະນຳ ) ກິດຈະກຳທີ່ຈະແຈ້ງ ໝາຍຄວາມວ່າ ມີນັກຮຽນໜຶ່ງຄົນ ຫຼື ຫຼາຍໆຄົນບໍ່ຮູ້ວ່າຕົນເອງຈະຕ້ອງເຮັດຫຍັງ | ຮັບປະກັນວ່າ ນັກຮຽນທັງໝົດຮູ້ວ່າຕົນເອງຕ້ອງເຮັດຫຍັງສຳລັບກິດຈະກຳການປະເມີນ. |
| ບໍ່ມີປຶ້ມບັນທຶກ ແລະ ປຶ້ມຄູ່ມືຄູໃນເວລາສັງເກດ. | ມີປຶ້ມບັນທຶກ ແລະ ປຶ້ມຄູ່ມືຄູຖືຢູ່ໃນມືໃນເວລາສັງເກດນັກຮຽນ. |
| ບໍ່ໄດ້ໃຊ້ເວລາພຽງພໍເພື່ອສັງເກດນັກຮຽນເປັນລາຍບຸກຄົນ. | ໃຊ້ເວລາສັງເກດນັກຮຽນເປັນລາຍບຸກຄົນຢ່າງພຽງພໍ ເພື່ອໃຫ້ນັກຮຽນໄດ້ສະແດງອອກຄວາມສາມາດຂອງຕົນຢ່າງເຕັມທີ່. |
| ຢືນຫ່າງຈາກນັກຮຽນຫຼາຍເກີນໄປໃນເວລາສັງເກດ ເພື່ອຮັບຟັງການສົນທະນາຂອງເຂົາເຈົ້າ ແລະ ເຫັນຜົນງານຂອງພວກເຂົາ. | ຢືນໃກ້ນັກຮຽນໃນໄລຍະໃກ້ພໍສົມຄວນໃນເວລາສັງເກດ ເພື່ອສາມາດໄດ້ຍິນການສົນທະນາ ແລະ ເຫັນຜົນງານຂອງພວກເຂົາ. |
| ບໍ່ມີການຊຸກຍູ້ນັກຮຽນໃຫ້ບັນລຸຂີດຄວາມສາມາດຂອງຕົນຢ່າງເຕັມທີ່ | ນຳໃຊ້ການຕັ້ງຄຳຖາມຖ້າຈຳເປັນ ເພື່ອຊຸກຍູ້ນັກຮຽນໃຫ້ບັນລຸຂີດຄວາມສາມາດຂອງຕົນຢ່າງເຕັມທີ່. |
| ບໍ່ມີໂອກາດດຳເນີນກິດຈະກຳການປະເມີນໃນຮູບແບບການມອບວຽກບ້ານ. | ຊອກໂອກາດທີ່ເໝາະສົມ ເພື່ອດຳເນີນກິດຈະກຳການປະເມີນໃນຮູບແບບການມອບວຽກບ້ານ. |

## I. ຍຸດທະວິທີ / ວິທີການປະເມີນເພື່ອປັບປຸງການຮຽນ

ໃນພາກນີ້ໄດ້ອະທິບາຍເຖິງ 6 ຍຸດທະວິທີ / ວິທີການ ທີ່ຄູສອນສາມາດຈັດຕັ້ງປະຕິບັດໃນທຸກໆຂັ້ນຮຽນໃນຊັ້ນປະຖົມ ແລະ ໃນທຸກລາຍວິຊາເພື່ອປະເມີນຄວາມຄືບໜ້າຂອງນັກຮຽນ ແລະ ກຳນົດ ຫຼື ບອກໄດ້ວ່ານັກຮຽນຕ້ອງການ ການຊ່ວຍເຫຼືອເພີ່ມເຕີມຫຍັງບໍ. ຍຸດທະວິທີ / ວິທີການດັ່ງກ່າວນີ້ໄດ້ຂຽນໃນຮູບແບບທີ່ຊ່ວຍໃຫ້ນັກສຶກສາອ່ານຢ່າງງ່າຍດາຍແບບຄຳຕໍ່ຄຳໃຫ້ແກ່ຄູສອນ. ເພື່ອເປັນການຊ່ວຍເຫຼືອຄູສອນໃຫ້ເຂົ້າໃຈກ່ຽວກັບວິທີການດັ່ງກ່າວ ແລະ ເພື່ອເປັນການເສີມສ້າງຄວາມໝັ້ນໃຈຂອງຄູໃນເວລາທີ່ທົດລອງນຳໃຊ້ໃນຫ້ອງຮຽນໃຫ້ສາທິດວິທີການດັ່ງກ່າວນັ້ນໃຫ້ແກ່ຄູສອນ.

1. **ການດຶງເອົາຂໍ້ມູນ**
2. **ການຕິດຕາມ**
3. **ບັດຕອບຮັບ ຫຼື ສັນຍາລັກຕອບຮັບ**
4. **ການຕັ້ງຄຳຖາມເພື່ອທວນຄືນຄວາມເຂົ້າໃຈຕໍ່ຄຳແນະນຳ**
5. **ການປະເມີນກັນເອງ / ການປະເມີນຈາກເພື່ອນ**
6. **ການສະທ້ອນຄືນໃນຕອນທ້າຍຂອງບົດຮຽນ**

1. **ການດຶງເອົາຂໍ້ມູນ**

ການດຶງເອົາຂໍ້ມູນ ເປັນຍຸດທະວິທີ / ວິທີການໜຶ່ງທີ່ນັກສຶກສາສາມາດນຳໃຊ້ ເພື່ອກວດເບິ່ງວ່ານັກຮຽນໄດ້ຮູ້ ຫຍັງແດ່ແລ້ວໃນຫົວຂໍ້ໃດໜຶ່ງ. ເຊິ່ງຈຸດນີ້ປະກອບມີການຕັ້ງຄຳຖາມ ຖາມນັກຮຽນ ໜຶ່ງ ຫຼື ຫຼາຍໆ ຄຳຖາມ ໂດຍປົກກະຕິແລ້ວຄູຈະຖາມໃນຕອນຕົ້ນຂອງບົດຮຽນໃນເວລາທີ່ຄູນຳສະເໜີຫົວຂໍ້. ຖ້ານັກຮຽນມີບັນຫາໃນການຕອບຄຳຖາມ ຈຸດນີ້ແມ່ນໄດ້ຊີ້ໃຫ້ເຮົາຮູ້ວ່າ ນັກຮຽນອາດຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມໃນຈຸດໃດຈຸດໜຶ່ງຂອງບົດຮຽນ.

**ຕົວຢ່າງ**

ການຕັ້ງຄຳຖາມດຶງເອົາຂໍ້ມູນໃນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ, ຂັ້ນ ປ 3, ບົດທີ 5 ສັດກິນຊີ້ນ, ສັດກິນພືດ, ສັດກິນທັງພືດ ແລະ ຊີ້ນ.

- **ພວກນ້ອງເຫັນຫຍັງແດ່ຢູ່ໃນຮູບ ?**
- **ພວກມັນແມ່ນສັດຫຍັງ ?**
- **ສັດຊະນິດນີ້ແມ່ນໂຕຫຍັງ ?**
- **ພວກນ້ອງຮູ້ຈັກສັດໂຕໃດອີກບໍ່ໃນຮູບນີ້ ?**
- **ສັດແຕ່ລະຊະນິດກິນອາຫານຄືກັນ ຫຼື ຕ່າງກັນ ?**
- **ສັດຊະນິດໃດທີ່ບໍ່ກິນພືດ ?**
- **ສັດແຕ່ລະຊະນິດກິນຫຍັງເປັນອາຫານ ?**

2. **ການຕິດຕາມ**

ການຕິດຕາມເປັນວິທີການທີ່ເປັນປະໂຫຍດ ເຊິ່ງ ຊ່ວຍໃຫ້ນັກສຶກສາສາມາດເຫັນໄດ້ການປະຕິບັດກິດຈະກຳ ຂອງນັກຮຽນ ຖ້າຫາກນັກຮຽນມີບັນຫາ, ພົບພໍ້ສິ່ງທ້າທາຍ ຫຼື ຕ້ອງການຄວາມຊ່ວຍເຫຼືອ. ການຕິດຕາມຮຽກຮ້ອງໃຫ້ນັກສຶກສາມີການເຄື່ອນຍ້າຍໃນຫ້ອງຮຽນຢ່າງທົ່ວເຖິງພາຍຫຼັງທີ່ກຳນົດກິດຈະກຳ ເພື່ອຕິດຕາມໃນຂະນະທີ່ນັກຮຽນເຮັດກິດຈະກຳ.

**ໃນເວລາທີ່ຕິດຕາມນັກຮຽນ ສິ່ງທີ່ປະຕິບັດມີຄື:**

- ຢືນຫ່າງຈາກນັກຮຽນຢູ່ໃນໄລຍະທີ່ເໝາະສົມ ເພື່ອສາມາດຟັງການສົນທະນາກັນ ແລະ ເຫັນໄດ້ສິ່ງທີ່ນັກຮຽນກຳລັງເຮັດ ແຕ່ກໍບໍ່ຄວນຢືນໃກ້ເກີນໄປເພາະຈະເປັນການລົບກວນ ແລະ ກົດດັນນັກຮຽນ.
- ກວດຄືນເບິ່ງວ່ານັກຮຽນມາຖືກທາງແລ້ວບໍ ? ໃຫ້ການຊ່ວຍເຫຼືອນັກຮຽນເພີ່ມເຕີມສຳລັບຜູ້ທີ່ຍັງສັບສົນ ຫຼື ບໍ່ເຂົ້າໃຈ ເພື່ອໃຫ້ພວກເຂົາເຈົ້າປະຕິບັດ ຫຼື ເຮັດກິດຈະກຳໃຫ້ສຳເລັດ.

3. **ບັດຕອບຮັບ ຫຼື ສັນຍາລັກຕອບຮັບ**

ບັດຕອບຮັບ ຫຼື ສັນຍາລັກຕອບຮັບ ເປັນວິທີການປະເມີນຜົນອີກຮູບແບບໜຶ່ງເພື່ອໃຫ້ໄດ້ຮັບຄຳເຫັນຈາກ

ນັກຮຽນຢ່າງທັນທີ. ພ້ອມດຽວກັນນັ້ນ, ບັດຕອບຮັບ ຫຼື ສັນຍາລັກຕອບຮັບ ຍັງໄດ້ຊຸກຍູ້ໃຫ້ນັກຮຽນໄດ້ມີສ່ວນຮ່ວມໃນການສະທ້ອນຄືນຕໍ່ສິ່ງທີ່ພວກເຂົາໄດ້ຮູ້ມາ. ວິທີການນີ້ໄດ້ປະກອບມີການຢາຍຊຸດບັດຕອບຮັບ ຫຼື ບັດສັນຍາລັກຕອບຮັບ ໂດຍໃຫ້ນັກຮຽນຍົກບັດຕອບຮັບນັ້ນຂຶ້ນ ເຊິ່ງ ເປັນບັດຕອບຮັບທີ່ຊີ້ບອກວ່າ :

- **ນັກຮຽນເຂົ້າໃຈເນື້ອໃນດີປານໃດ.**
- **ນັກຮຽນມີຄວາມໝັ້ນໃຈໃນການເຮັດກິດຈະກໍາຫຼາຍປານໃດ.**
- **ນັກຮຽນເຮັດກິດຈະກໍາໄດ້ດີປານໃດ.**

ຖ້າມີນັກຮຽນຈໍານວນຫຼາຍຫາກຍົກບັດຕອບຮັບ ຫຼື ບັດສັນຍາລັກທີ່ບອກວ່າ ພວກເຂົາບໍ່ເຂົ້າໃຈ, ບໍ່ມີຄວາມໝັ້ນໃຈໃນກິດຈະກໍາ ແລະ ຮູ້ສຶກວ່າຕົນເອງເຮັດບໍ່ໄດ້ດີປານໃດເປັນຈໍານວນຫຼວງຫຼາຍ, ຈຸດນີ້ກໍເປັນສິ່ງທີ່ຊີ້ໃຫ້ເຫັນວ່ານັກສຶກສາຕ້ອງໄດ້ໃຫ້ການຊ່ວຍເຫຼືອນັກຮຽນເພີ່ມເຕີມ ຫຼື ອາດຈະທວນຄືນເນື້ອໃນທີ່ໄດ້ສອນໄປແລ້ວ ກ່ອນທີ່ຈະສືບຕໍ່ສອນບົດຮຽນຕໍ່ໄປ.

**ບາດກ້າວໃນການສ້າງ ແລະ ນໍາໃຊ້ບັດຕອບຮັບ ຫຼື ບັດສັນຍາລັກມີດັ່ງຕໍ່ໄປນີ້ຄື:**

**ການສ້າງບັດຕອບຮັບມີຂັ້ນຕອນຄື:**

- ປະດິດຊຸດບັດຕອບຮັບ ຫຼື ບັດສັນຍາລັກຕອບຮັບໜຶ່ງຊຸດ ແລະ ມອບໃຫ້ນັກຮຽນແຕ່ລະຄົນ. ແຕ່ລະຊຸດຄວນປະກອບມີ 3 ບັດຄື: ບັດຮູບໜ້າຍິ້ມ, ບັດຮູບໜ້າທໍາມະດາ ແລະ ບັດຮູບໜ້າເສົ້າ ເຮັດເປັນເຈ້ຍຂະໜາດ ເອ 5.
- ໃນກໍລະນີທີ່ນັກສຶກສາໄປສອນ ແຕ່ມີນັກຮຽນຫຼາຍໃນຫ້ອງຮຽນ ກໍໃຫ້ນັກຮຽນເຮັດບັດຕອບຮັບ ຫຼື ບັດສັນຍາລັກຂອງໃຜລາວ

**ການນໍາໃຊ້ບັດຕອບຮັບ ຫຼື ບັດສັນຍາລັກ**

- ຢາຍຊຸດບັດຕອບຮັບ ຫຼື ບັດສັນຍາລັກໃຫ້ນັກຮຽນແຕ່ລະຄົນໃນຕອນຕົ້ນຂອງບົດຮຽນ ອາດຈະໃຫ້ນັກຮຽນໃຊ້ສັນຍາລັກມື ( ຍົກໂປ້ຂຶ້ນ, ຍົກໂປ້ຊີ້ກາງ ແລະ ຊີ້ໂປ້ລົງ )ແທນການສ້າງບັດຕອບຮັບ ຫຼື ບັດສັນຍາລັກ ເພື່ອຊີ້ແຈງຄວາມເຂົ້າໃຈຂອງພວກເຂົາ ຫຼື ລະດັບຄວາມໝັ້ນໃຈຂອງພວກເຂົາ.
- ອະທິບາຍຄວາມໝາຍຂອງສັນຍາລັກທັງສາມແບບໃຫ້ນັກຮຽນຟັງເຊັ່ນ: ໜ້າຍິ້ມໝາຍຄວາມວ່ານັກຮຽນເຂົ້າໃຈ ຫຼື ຮູ້ສຶກໝັ້ນໃຈດີ, ໜ້າທໍາມະດາໝາຍຄວາມວ່ານັກຮຽນເຂົ້າໃຈອັນໃດອັນໜຶ່ງດີ ຫຼື ຂ້ອນຂ້າງໝັ້ນໃຈ ແລະ ໜ້າເສົ້າໝາຍຄວາມວ່າ ນັກຮຽນບໍ່ເຂົ້າໃຈ ຫຼື ບໍ່ມີຄວາມໝັ້ນໃຈ.
- ໃນຂະນະທີ່ແຕ່ງບົດສອນ ໃຫ້ຄິດວ່ານັກສຶກສາຈະໃຫ້ນັກຮຽນນໍາໃຊ້ບັດຕອບຮັບ ຫຼື ບັດສັນຍາລັກເພື່ອປະເມີນຄວາມຮູ້ ແລະ ຄວາມໝັ້ນໃຈຂອງເຂົາເຈົ້າໃນເວລາໃດ. ໃນເວລາສອນໃຫ້ຕັ້ງຄໍາຖາມນັກຮຽນເພື່ອປະເມີນເຂົາເຈົ້າ, ຄໍາຖາມເພື່ອກວດຄືນຄວາມເຂົ້າໃຈ ເພື່ອສະແດງຄວາມຮູ້ສຶກກ່ຽວກັບກິດຈະກໍາທີ່ພວກເຂົາເຮັດ. ຈາກນັ້ນ, ນັກຮຽນຈະໄດ້ຍົກບັດຕອບຮັບ ຫຼື ບັດສັນຍາລັກຂຶ້ນ ໂດຍອີງໃສ່ຄວາມເຂົ້າໃຈຂອງຕົນ.

  **ຕົວຢ່າງ**

  ວິຊາ ພາສາລາວ ຂັ້ນ ປ 2, ບົດທີ 1, ຊົ່ວໂມງທີ 4 ( ປຶ້ມຄູ່ມືຄູ ໜ້າທີ 62 ) ຂັ້ນຝຶກປະຕິບັດ ແລະ ນໍາໃຊ້. ໃນກິດຈະກໍານີ້ ນັກຮຽນຕ້ອງໄດ້ຢອງກ້ອນຫີນໃສ່ຄໍາສັບທີ່ຄູເວົ້າ. ໃນຕອນທ້າຍຂອງກິດຈະກໍາ ກໍຖາມຄໍາຖາມວ່ານັກຮຽນຊອກຍາກ ຫຼື ຊອກງ່າຍພຽງໃດ ໂດຍໃຫ້ນັກຮຽນຍົກບັດໃດບັດໜຶ່ງຂອງບັດຕອບຮັບ ຫຼື ບັດສັນຍາລັກຂອງພວກເຂົານັ້ນຂຶ້ນ.

  ວິຊາ ຄຸນສົມບັດ ຂັ້ນ ປ 3 , ບົດທີ 7 ( ປຶ້ມຄູ່ມືຄູ, ໜ້າທີ 34 ) ຂັ້ນຝຶກປະຕິບັດ ແລະ ນໍາໃຊ້ວິທີຫຼິ້ນເກມ: ພາຍຫຼັງການອະທິບາຍວິທີຫຼິ້ນເກມໃຫ້ແກ່ນັກຮຽນ ກໍກວດຄືນກັບນັກຮຽນວ່າພວກເຂົາເຂົ້າໃຈ ຫຼື ບໍ ໂດຍໃຫ້ພວກເຂົາຍົກບັດຕອບຮັບ ຫຼື ສັນຍາລັກຕອບຮັບນັ້ນຂຶ້ນ.

ຕິດຕາມ ແລະ ສັງເກດເບິ່ງການຍົກບັດຂອງນັກຮຽນ, ຖ້ານັກຮຽນຍົກບັດຕອບຮັບ ຫຼື ບັດສັນຍາລັກທີ່ຊີ້ບອກວ່າ ບໍ່ເຂົ້າໃຈ ຫຼື ຂາດຄວາມໝັ້ນໃຈ, ນັກສຶກສາຕ້ອງພິຈາລະນາ ແລະ ຊອກຫາວິທີແກ້ໄຂເຊັ່ນ: ການໃຫ້ຄໍາແນະນໍາທີ່ຈະແຈ້ງຂຶ້ນຕື່ມ, ນໍາໃຊ້ເວລາພັກຜ່ອນ ຊ່ວຍເຫຼືອນັກຮຽນຜູ້ທີ່ຍັງບໍ່ທັນເຂົ້າໃຈບົດຮຽນເທື່ອ.

ໃຫ້ນັກຮຽນເກັບຮັກສາບັດຕອບຮັບ ຫຼື ບັດສັນຍາລັກໄວ້ທີ່ໂຕະຂອງໃຜລາວເພື່ອສະດວກໃນການນໍາໃຊ້ໃນຄັ້ງຕໍ່ໄປ.

4. **ການຕັ້ງຄໍາຖາມເພື່ອທວນຄືນຄວາມເຂົ້າໃຈຕໍ່ຄໍາແນະນໍາ**

ຕັ້ງຄໍາຖາມ ຖາມນັກຮຽນ ເພື່ອກວດຄືນຄວາມເຂົ້າໃຈຕໍ່ຄໍາແນະນໍາຂອງຄູ ແລະ ເພື່ອຊ່ວຍໃຫ້ຄູເຂົ້າໃຈຂະບວນການຄົ້ນຄິດຂອງນັກຮຽນ.

ການທວນຄືນ ຫຼື ກວດຄືນຄວາມເຂົ້າໃຈຂອງພວກເຂົາຕໍ່ກັບຄໍາແນະນໍາມີຄວາມສໍາຄັນຫຼາຍ ເພາະວ່າມັນຮັບປະກັນໄດ້ວ່ານັກຮຽນຈະສາມາດເຮັດກິດຈະກໍາໄດ້ດີ ແລະ ທ່ວງທັນກັບເວລາທີ່ກໍານົດໄວ້. ຖ້າເຫັນວ່ານັກຮຽນບໍ່ເຂົ້າໃຈວິທີປະຕິບັດກິດຈະກໍາໃຫ້ຄູອະທິບາຍກິດຈະກໍານັ້ນຄືນ ແລະ ສາທິດວິທີປະຕິບັດ.

ຄໍາຖາມເພື່ອທວນຄືນຄວາມເຂົ້າໃຈຂອງນັກຮຽນຕໍ່ກັບຄໍາແນະນໍາຄວນເປັນ:

- **ຄໍາຖາມປິດ**
- **ກະທັດຮັດ ແລະ ຈະແຈ້ງ**
- **ເຂົ້າໃຈງ່າຍ**

**ຕົວຢ່າງ**

ຄໍາຖາມເພື່ອທວນຄືນຄວາມເຂົ້າໃຈຕໍ່ຄໍາແນະນໍາ ວິຊາ ພາສາລາວ ຂັ້ນ ປ 3, ບົດທີ 2, ກິດຈະກໍາ 7

- ມີຈັກຄໍາສັບ ?
- ມີຈັກຮູບພາບ ?
- ພວກນ້ອງຈະໄດ້ເຮັດຫຍັງກັບຮູບພາບ ແລະ ຄໍາສັບ ?
- ພວກນ້ອງຈະໄດ້ເຮັດວຽກເປັນຄູ່ ຫຼື ເປັນກຸ່ມ ?
- ພວກນ້ອງມີເວລາຫຼາຍປານໃດໃນກິດຈະກໍານີ້ ?

ການຖາມ ຄາຖາມເພື່ອກວດຄືນຂະບວນການຄົ້ນຄິດຂອງນັກຮຽນ ຊ່ວຍໃຫ້ນັກສຶກສາເຂົ້າໃຈໄດ້ວ່ານັກຮຽນຂອງນັກສຶກສາເຂົ້າໃຈບົດຮຽນໄດ້ດີປານໃດ ແລະ ສາມາດນໍາໃຊ້ສິ່ງທີ່ຕົນໄດ້ຮຽນມາ ຫຼື ບໍ່. ພາຍຫຼັງທີ່ນັກສຶກສາໄດ້ກໍານົດ ກິດຈະກໍາໃດໜຶ່ງຂຶ້ນມາ ແລະ ກໍາລັງຕິດຕາມນັກຮຽນຢູ່ນັ້ນກໍໃຫ້ໃຊ້ຄໍາຖາມປິດຖາມນັກຮຽນກ່ຽວກັບສິ່ງທີ່ພວກເຂົາກໍາລັງເຮັດ. ຖ້າເຫັນວ່າ ນັກຮຽນຍັງສັບສົນກັບເນື້ອໃນຂອງບົດຮຽນ ກໍຕ້ອງໄດ້ໃຫ້ການຊ່ວຍເຫຼືອເພີ່ມເຕີມ.

**ຕົວຢ່າງ**

ໃນເວລາທີ່ນັກຮຽນກໍາລັງເຮັດກິດຈະກໍາ 9, ຄໍາຖາມທີ່ນັກສຶກສາອາດຈະຖາມນັກຮຽນມີຄື:

- ເປັນຫຍັງພວກນ້ອງຈຶ່ງເລືອກເອົາຂໍ້ ຂ ສໍາລັບຄໍາຖາມຂໍ້ທີ 2 ?
- ຮູບພາບ ແລະ ປະໂຫຍກທີ 3 ແມ່ນກ່ຽວກັບຫຍັງ ?
- ຄໍາຖາມຂໍ້ 4 ທີ່ພວກນ້ອງບອກວ່າຂໍ້ ກ ເປັນຄໍາຕອບທີ່ຖືກຕ້ອງພວກນ້ອງຮູ້ໄດ້ແນວໃດວ່າມັນເປັນຄໍາຕອບທີ່ຖືກຕ້ອງ ?

5. **ການປະເມີນກັນເອງ / ການປະເມີນຈາກເພື່ອນ**

ການໃຫ້ນັກຮຽນປະເມີນກັນເອງ ເປັນວິທີການໜຶ່ງຂອງການປະເມີນເພື່ອປັບປຸງການຮຽນ ເຊິ່ງ ນັກຮຽນໄດ້

ປະເມີນຜົນງານເຊິ່ງກັນ ແລະ ກັນ, ອາດຈະເຮັດເປັນຄູ່ ຫຼື ກຸ່ມ. ການໃຫ້ນັກຮຽນປະເມີນຜົນງານເຊິ່ງກັນ ແລະ ກັນ
ແມ່ນຊ່ວຍໃຫ້ນັກຮຽນໄດ້ເຫັນຄຸນຄ່າຂອງການປະກອບຄາຄິດຄາເຫັນ ເພື່ອໃຫ້ພວກເຮົາໄດ້ຮຽນຮູ້ ແລະ
ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ສິ່ງນີ້ຍັງຊ່ວຍເພີ່ມການຮຽນຮູ້ ແລະ ເປີດໂອກາດໃຫ້ນັກຮຽນໄດ້ໂອ້ລົມ,ສົນທະນາ ,
ອະທິບາຍສິ່ງທ້າທ້າຍຕ່າງໆ ເຊິ່ງໄດ້ຊ່ວຍໃຫ້ນັກຮຽນປະສົບຜົນສາເລັດໄດ້ຫຼາຍກວ່າການທີ່ພວກເຂົາບໍ່ໄດ້ຮັບ ການ
ຊ່ວຍເຫຼືອ.

ໃນເວລາທີ່ໃຫ້ນັກຮຽນເຮັດກິດຈະກໍາປະເມີນກັນເອງນັ້ນ ຕ້ອງຮັບປະກັນວ່າຄູໄດ້ອອກແບບວິທີ ການຈັດຕັ້ງປະຕິບັດໃນແບບທີ່ນັກຮຽນສາມາດເຮັດນໍາໄດ້.

1. ຖ້າໃຫ້ນັກຮຽນກວດການຂຽນກັນ ແລະ ກັນ ກໍຕັ້ງເງື່ອນໄຂທີ່ງ່າຍດາຍແມ່ນ / ບໍ່ແມ່ນເຊັ່ນ:
   - ຄູ່ຂອງຂ້ອຍບໍ່ໄດ້ຂຽນຄໍາຫຍັງຜິດເລີຍ.
   - ຄູ່ຂອງຂ້ອຍໄດ້ໃສ່ໝາຍຈໍ້າເມັດໃນຕອນທ້າຍຂອງທຸກໆປະໂຫຍກ.
   - ຄູ່ຂອງຂ້ອຍໄດ້ຈັດສັນການຂຽນຂອງລາວອອກເປັນສາມວັກ / ຕອນສັ້ນໆ.
   - ຄູ່ຂອງຂ້ອຍໄດ້ໃສ່ຫົວຂໍ້ຂອງການຂຽນ.
2. ຖ້ານັກຮຽນໄດ້ກວດຄໍາຕອບເຊິ່ງກັນ ແລະ ກັນ ໃນກິດຈະກໍາໃດໜຶ່ງກໍຕ້ອງໄດ້ເອົາເຈ້ຍຄໍາຕອບ ນັ້ນໃຫ້ພວກເຂົາ ເພື່ອໃຫ້ພວກເຂົາໄດ້ສົມທຽບ
3. ພາຍຫຼັງທີ່ນັກຮຽນກວດວຽກຂອງຄູ່ຕົນເອງສໍາເລັດແລ້ວ ກໍໃຫ້ພວກເຂົາໃຫ້ຄໍາເຫັນຕໍ່ກັບສິ່ງທີ່ຕົນ ເອງໄດ້ກວດກັບຄູ່ຂອງຕົນກັນ ແລະ ກັນ.

**ຕົວຢ່າງ**

ວິຊາ ພາສາລາວ ຂັ້ນ ປ 3 ບົດທີ 20, ກິດຈະກາທີ 10 : ກການຂຽນທວາຍ ປຶ້ມຄູ່ມືຄູ ໜ້າ 201. ພາຍຫຼັງ ນັກຮຽນແຕ່ລະຄົນຂຽນແລ້ວໆ ໃຫ້ນັກຮຽນປ່ຽນບົດຂຽນຂອງຕົນເອງກັບໝູ່ເພື່ອກວດ. ຂຽນຄໍາຕອບທີ່ຖືກຕ້ອງ ຕິດໃສ່ກະດານໃຫ້ນັກຮຽນເບິ່ງເປັນບ່ອນອີງພ້ອມທັງແນະນໍາວິທີກວດໃຫ້ນັກຮຽນຄື: ຂີດກ້ອງຄໍາສັບທີ່ຜິດ ພ້ອມ ທັງຂຽນຄໍາທີ່ຖືກຕ້ອງໃສ່ດ້ານເທິງ. ຫຼທາງຈາກກວດ, ແລ້ວກໍໃຫ້ນັກຮຽນແຕ່ລະຄົນສົ່ງບົດຂຽນໃຫ້ເຈົ້າຂອງເດີມ ພ້ອມທັງແນະນໍາ ແລະ ບອກຈຸດທີ່ໝູ່ເຮັດຜິດ.

6. **ການສະທ້ອນຄືນໃນຕອນທ້າຍຂອງບົດຮຽນ.**

ການສະທ້ອນຄືນ ແມ່ນການເປີດໂອກາດໃຫ້ນັກຮຽນໄດ້ສະທ້ອນຄືນຄວາມຄືບໜ້າຜົນການຮຽນຂອງຕົນ ເອງ
ເຊິ່ງສາມາດຊ່ວຍໃຫ້ນັກສຶກສາຮັບຮູ້ໄດ້ວ່າ ນັກຮຽນມີຄວາມເຂົ້າໃຈບົດຮຽນໜ້ອຍຫຼາຍປານໃດ, ການສະທ້ອນຄືນ ມີຄວາມສໍາຄັນເພາະມັນໄດ້ຊ່ວຍໃຫ້ນັກສຶກສາກວດຄືນສິ່ງທີ່ນັກຮຽນໄດ້ຮຽນຮູ້ມາແລ້ວ. ນອກຈາກນັ້ນ. ມັນຍັງໄດ້ ເປີດໂອກາດໃຫ້ນັກຮຽນໄດ້ຖາມ ຄໍາຖາມກ່ຽວກັບບົດຮຽນ ຫຼື ຫົວຂໍ້ໃນຊົ່ວໂມງສອນນັ້ຍ. ການສະທ້ອນຄືນ ປົກກະຕິແລ້ວແມ່ນປະຕິບັດໃນຕອນທ້າຍຂອງບົດຮຽນ.

ການເຮັດສະທ້ອນຄືນກັບນັກຮຽນ ຄູຄວນປະຕິບັດຕາມບາດກ້າວລຸ່ມນີ້:

- ປັບປ່ຽນຈຸດປະສົງຂອງບົດຮຽນມາເປັນປະໂຫຍກ ຂ້ອຍສາມາດ 2-3 ປະໂຫຍກ.ນໍາໃຊ້ຄໍາສັບທີ່ ງ່າຍດາຍ ເພື່ອເຮັດໃຫ້ປະໂຫຍກດັ່ງກ່າວເປັນທີ່ເຂົ້າໃຈງ່າຍສໍາລັບນັກຮຽນ.
- ຂຽນປະໂຫຍກ ຂ້ອສາມາດ ໃສ່ເທິງກະດານແລ້ວໃຫ້ນັກຮຽນຂຽນໃສ່ປຶ້ມຂອງໃຜລາວ.

- ໃຫ້ນັກຮຽນເບິ່ງປະໂຫຍກທຳອິດ, ຖ້ານັກຮຽນຮູ້ສຶກໝັ້ນໃຈດີກໍໃຫ້ແຕ້ມຮູບໜ້າຍິ້ມ ຖ້ານັກຮຽນຮູ້ສຶກໝັ້ນໃຈປານກາງ ກໍໃຫ້ແຕ້ມຮູບໜ້າທຳມະດາ ( ໜ້າຕາຊື່ໆ ) ແລະ ຖ້ານັກຮຽນຫາກບໍ່ຮູ້ສຶກໝັ້ນໃຈເລີຍກໍໃຫ້ແຕ້ມຮູບໜ້າເສົ້າ.
- ນັກຮຽນຈະປະຕິບັດຕາມຂໍ້ເທິງຈົນກວ່າຄົບໝົດທຸກປະໂຫຍກ.
- ຕິດຕາມນັກຮຽນໃນຂະນະທີ່ພວກເຂົາເຮັດສະທ້ອນຄືນ. ຖ້າເຫັນນັກຮຽນຈຳນວນຫຼາຍຍົກຮູບແຕ້ມໜ້າເສົ້າຂຶ້ນ ສິ່ງນີ້ແມ່ນໄດ້ຊີ້ໃຫ້ເຫັນວ່າ ນັກສຶກສາຕ້ອງໄດ້ໃຫ້ການຊ່ວຍເຫຼືອເຂົາເຈົ້າເພີ່ມເຕີມ ຫຼື ອາດຈະທວນຄືນສິ່ງທີ່ໄດ້ສອນໄປແລ້ວ ກ່ອນທີ່ຈະສືບຕໍ່ບົດບົດສອນຕໍ່ໄປ.

**ຕົວຢ່າງ**

ປະໂຫຍກ ຂ້ອຍສາມາດ

| ວິຊາ / ບົດທີ | ຈຸດປະສົງ | ປະໂຫຍກ ຂ້ອຍສາມາດ |
|---|---|---|
| ວິທະຍາສາດ ແລະ ສິ່ງແວດລ້ອມ ຂັ້ນ ປ 3 ບົດທີ 1 | 1. ບອກຄວາມໝາຍຂອງນ້ຳຖ້ວມ ແລະ ດິນເຈື່ອນ<br>2. ອະທິບາຍສາເຫດ ແລະ ຜົນກະທົບຂອງນ້ຳຖ້ວມ ແລະ ດິນເຈື່ອນ<br>3. ອະທິບາຍການປ້ອງກັນນ້ຳຖ້ວມ ແລະ ດິນເຈື່ອນ<br>4. ບອກການຮັກສາຄວາມປອດໄພເວລາເກີດນ້ຳຖ້ວມ | -ຂ້ອຍສາມາດບອກຄວາມໝາຍຂອງນ້ຳຖ້ວມ ແລະ ດິນເຈື່ອນ<br>-ຂ້ອຍສາມາດອະທິບາຍສາເຫດ ແລະ ຜົນກະທົບຂອງນ້ຳຖ້ວມ ແລະ ດິນເຈື່ອນ.<br>-ຂ້ອຍສາມາດອະທິບາຍການປ້ອງກັນນ້ຳຖ້ວມ ແລະ ດິນເຈື່ອນ<br>-ຂ້ອຍສາມາດບອກການຮັກສາຄວາມປອດໄພເວລາເກີດນ້ຳຖ້ວມ |
| ພາສາອັງກິດ ຂັ້ນ ປ 3 ບົດທີ 2 | 1. ເວົ້າອອກສຽງ S ແລະ ສະແດງທ່າທາງປະກອບ<br>2. ອ່ານ ແລະ ຂຽນຕົວອັກສອນ S<br>3. ກ່າຍຕົວອັກສອນ S | -ຂ້ອຍສາມາດອອກສຽງຕົວອັກສອນ S ແລະ ສະແດງທ່າທາງປະກອບ<br>- ຂ້ອຍສາມາດອ່ານ ແລະ ຂຽນຕົວອັກສອນ S |

## II.ການປະເມີນເພື່ອສະຫຼຸບຜົນການຮຽນ

ໃນພາກນີ້ຂອງໂມດູນໄດ້ອະທິບາຍເຖິງ 5 ວິທີການສຳລັບການປະເມີນເພື່ອສະຫຼຸບຜົນການຮຽນ ທີ່ຄູສອນສາມາດນຳໃຊ້ ຫຼື ຈັດຕັ້ງປະຕິບັດໃນທຸກຂັ້ນຮຽນ ແລະ ທຸກລາຍວິຊາໃນເວລາທີ່ນຳໃຊ້ການປະເມີນແບບຮູບທຳ. ວິທີການດັ່ງກ່າວແມ່ນໄດ້ຂຽນອອກມາໃນຮູບແບບທີ່ນັກສຶກສາສາມາດອ່ານຢ່າງງ່າຍດາຍ ແບບຄຳຕໍ່ຄຳໃຫ້ແກ່ຄູສອນ. ເພື່ອເປັນການຊ່ວຍເຫຼືອຄູສອນໃຫ້ເຂົ້າໃຈກ່ຽວກັບວິທີການດັ່ງດ່າວ ແລະ ເສີມສ້າງຄວາມໝັ້ນໃຈຂອງເຂົາເຈົ້າໃນການທົດລອງວິທີການດັ່ງກ່າວຢູ່ໃນຫ້ອງຮຽນໃຫ້ນັກສຶກສາສາທິດບາງວິທີການໃຫ້ເບິ່ງ.

1. ການວາງແຜນ
2. ການກະກຽມກິດຈະກຳການວັດ ແລະ ປະເມີນຜົນ

3. ການສັງເກດ
4. ການຕັ້ງຄຳຖາມ
5. ການໃຫ້ວຽກບ້ານ

ເຊິ່ງມີລາຍລະອຽດແຕ່ລະຂໍ້ດັ່ງນີ້:

1. **ການວາງແຜນ**

ເປັນສິ່ງທີ່ສຳຄັນທີ່ຈະຕ້ອງໄດ້ຄິດກ່ຽວກັບການປະເມີນໃນເວລາທີ່ວາງແຜນ ເພື່ອຮັບປະກັນວ່າເມື່ອໃດ ຄູຈະ

ດຳເນີນການວັດ ແລະ ປະເມີນຜົນ, ນັກສຶກສາສາມາດນຳໃຊ້ການປະເມີນແບບຮູບຣິກ ເພື່ອປະເມີນການຮຽນຮູ້ຂອງນັກຮຽນ ແລະ ຂຽນບັນທຶກຜົນໄດ້ຮັບຂອງນັກຮຽນ, ນັກສຶກສາຕ້ອງຮັບປະກັນວ່າຄູຈະໄດ້ປະຕິບັດຕາມບາດກ້າວລຸ່ມນີ້ໃນການວາງແຜນສຳລັບເຮັດການວັດ ແລະ ປະເມີນຜົນ.

- ກະກຽມວ່າຈະປະເມີນນັກຮຽນບຸກຄົນໃດ ຫຼື ກຸ່ມໃດ.
- ກະກຽມປຶ້ມບັນທຶກທີ່ຄູໃຊ້ສຳລັບບັນທຶກຜົນໄດ້ຮັບຂອງການປະເມີນ, ຊື່ນັກຮຽນ, ວັນທີ ແລະ ເວລາຂອງບົດສອນ.
- ສ້າງຄວາມຄຸ້ນເຄີຍກັບກິດຈະກຳປະເມີນ ໂດຍອ່ານແຕ່ລະຈຸດທີ່ກ່ຽວຂ້ອງໃນປຶ້ມຄູ່ມືຄູ. ໃຫ້ເບິ່ງທີ່ກ່ອງຂໍ້ຄວາມກ່ຽວກັບການວັດ ແລະ ປະເມີນຜົນທີ່ຂຽນວ່າ ນຳໃຊ້ເກນການປະເມີນຮູບຣິກ ທັງນີ້ກໍເພື່ອຮູ້ໄດ້ວ່າຈະຈັດຕັ້ງປະຕິບັດການວັດ ແລະ ປະເມີນຜົນຕອນໃດ.
- ອ່ານ ແລະ ສຶກສາເກນການປະເມີນແບບຮູບຣິກໃນເນື້ອໃນບົດສອນ.
- ກະກຽມອຸປະກອນທີ່ຈະໃຊ້ເຂົ້າໃນການປະເມີນ.

2. **ການກະກຽມກິດຈະກຳການວັດ ແລະ ປະເມີນຜົນ**

ເປັນສິ່ງສາຄັນທີ່ນັກສຶກສາຕ້ອງກະກຽມກິດຈະກາການວັດ ແລະ ປະເມີນຜົນຢ່າງຊັດເຈນ ເພື່ອວ່ານັກຮຽນຈະໄດ້ເຂົ້າໃຈຢ່າງຈະແຈ້ງວ່າ ພວກເຂົາຈະໄດ້ເຮັດຫຍັງ, ສິ່ງນີ້ຈະຮັບປະກັນໄດ້ວ່າ ນັກຮຽນຂອງຄູຢູ່ໃນຖານະທີ່ດີທີ່ສຸດທີ່ຈະດຳເນີນກິດຈະກຳທີ່ຄູຈະປະເມີນພວກເຂົາໄດ້ຢ່າງມີປະສິດທິພາບ. ໃຫ້ປະຕິບັດຕາມບາດກ້າວລຸ່ມນີ້ສຳລັບການກະກຽມກິດຈະກຳການວັດ ແລະ ປະເມີນຜົນ:

- ຮັບປະກັນວ່າຄູໄດ້ໃຫ້ຄຳແນະນຳທີ່ສັ້ນ, ກະທັດຮັດ ແລະ ຈະແຈ້ງ ໃນເວລາທີ່ອະທິບາຍ
- ຖາມຄຳຖາມເພື່ອກວດຄືນຄວາມເຂົ້າໃຈຂອງນັກຮຽນຕໍ່ຄຳແນະນຳຂອງຄູ ( ໃຫ້ເບິ່ງທີ່ຍຸດທະວິທີ / ວິທີການປະເມີນເພື່ອປັບປຸງການຮຽນ-ຖາມຄຳຖາມເພື່ອກວດຄືນຄວາມເຂົ້າໃຈ )
- ສາທິດກິດຈະກຳກັບນັກຮຽນໂດຍໃຫ້ນັກຮຽນຜູ້ທີ່ເຂົ້າໃຈດີ ອອກມາໜ້າກະດານເພື່ອຕອບຄຳຖາມທຳອິດ / ພາກທຳອິດຂອງກິດຈະກຳດັບຄູ ເພື່ອໃຫ້ນັກຮຽນຜູ້ອື່ນໆເຫັນວ່າເຮັດແນວໃດ.

3. **ການສັງເກດ**

ການສັງເກດເປັນຍຸດທະວິທີໜຶ່ງທີ່ມີຄວາມສາຄັນ ໃນເວລາທີ່ນາໃຊ້ເກນຮູບຣິກປະເມີນການຮຽນຮູ້ຂອງນັກຮຽນເຊິ່ງແຕກຕ່າງຈາກການຕິດຕາມ, ຄູບໍ່ຄວນແຊກແຊງ ຫຼື ລົບກວນນັກຮຽນ ຫຼື ໃຫ້ການຊ່ວຍເຫຼືອໃຫ້ແກ່ນັກຮຽນຜູ້ທີ່ບໍ່ເຂົ້າໃຈເທື່ອ. ຈຸດປະສົງຂອງການສັງເກດແມ່ນເພື່ອເຫັນໄດ້ວ່ານັກຮຽນ

ສາມາດເຮັດຫຍັງໄດ້ແດ່ ໂດຍ ປາສະຈາກການຊ່ວຍເຫຼືອຈາກຄູໃນນາມທີ່ເປັນຄູສອນ.ໃຫ້ປະຕິບັດຕາມບາດກ້າວລຸ່ມນີ້ ເພື່ອຮັບປະກັນວ່າຄູກຳລັງສັງເກດນັກຮຽນໄດ້ຢ່າງມີປະສິດທິພາບຄື:

- ຮັບປະກັນວ່າຄູມີປຶ້ມບັນທຶກຄະແນນ / ປຶ້ມບັນທຶກຂອງຕົນ ແລະ ສຳເນົາເອກະສານຂອງເກນຮູບຣິກກຽມພ້ອມໃນເວລາທີ່ສັງເກດນັກຮຽນ.
- ໝັ້ນໃຈວ່າຄູໄດ້ສັງເກດໃນໄລຍະຫ່າງທີ່ເໝາະສົມ ເຊິ່ງຊ່ວຍໃຫ້ຄູໄດ້ຍິນສິ່ງທີ່ນັກຮຽນເວົ້າ ຫຼື ເຫັນສິ່ງທີ່ນັກຮຽນເຮັດ / ຂຽນ.
- ຮັບປະກັນວ່າຄູໄດ້ໃຊ້ເວລາຢ່າງພຽງພໍສັງເກດນັກຮຽນເປັນລາຍບຸກຄົນເພື່ອຊ່ວຍໃຫ້ພວກເຂົາໄດ້ສະແດງອອກຄວາມສາມາດຂອງຕົນກ່ອນທີ່ຈະນຳໃຊ້ເກນປະເມີນແບບຮູບຣິກ.

4. **ການຕັ້ງຄຳຖາມ**

ການຕັ້ງຄາຖາມເປັນວິທີການໜຶ່ງທີ່ນັກສຶກສາສາມາດນາໃຊ້ໃນຂະນະທີ່ສັງເກດນັກຮຽນໃນເວລາທີ່ດຳເນີນກິດຈະກຳການວັດ ແລະ ປະເມີນຜົນ ເພື່ອຊຸກຍູ້ໃຫ້ນັກຮຽນໄດ້ໃຊ້ຄວາມສາມາອຢ່າງເຕັມທີ່. ຖ້ານັກສຶກສາສັງເກດນັກຮຽນເຮັດກິດຈະກຳວັດ ແລະ ປະເມີນຜົນ ແລະ ນັກສຶກສາເຫັນວ່າ ຜົນງານຂອງພວກເຂົາບໍ່ໄດ້ດີ ຫຼື ໄດ້ຄະແນນຂ້ອນຂ້າງຕ່ຳກ່ວາເກນ ແຕ່ນັກສຶກສາຄິດວ່າ ນັກຮຽນຜູ້ນັ້ນສາມາດເຮັດໄດ້ດີກວ່ານີ້ນັກສຶກສາສາມາດຖາມຄຳຖາມເຈາະຈົ້ມ ເພື່ອຊຸກຍູ້ເຂົາເຈົ້າໃຫ້ເຮັດໄດ້ດີຂຶ້ນຕາມເກນ ແລະ ບັນລຸໄດ້ຄະແນນທີ່ສູງຂຶ້ນ.

ສິ່ງທີ່ສຳຄັນນັ້ນ ນັກສຶກສາບໍ່ຕ້ອງບອກຄຳຕອບໃຫ້ແກ່ນັກຮຽນເພື່ອເປັນການຊ່ວຍເຫຼືອເຂົາເຈົ້າແຕ່ໃຫ້ແນະນຳ ແລະ ດຶງເອົາສິ່ງທີ່ເຂົາຮູ້ອອກມາ ໂດຍການຕັ້ງຄຳຖາມທີ່ເຊື່ອມໂຍງກັບການປະເມີນແບບຮູບຣິກ.

**ຕົວຢ່າງ**

ກໍລະນີສຶກສາ: ຄູກຳລັງສິດສອນ ວິຊາ ພາສາລາວ ຂັ້ນ ປ 3 ບົດທີ 1 ຊົ່ວໂມງ 1-2, ຄູໄດ້ດຳເນີນມາຮອດຂັ້ນຝຶກປະຕິບັດ ແລະ ນຳໃຊ້, ຄູເຮັດກິດຈະກຳໃຫ້ນັກຮຽນອ່ານບົດ ແລະ ຕອບ 4 ຄຳຖາມ. ໃນຂະນະທີ່ສັງເກດນັກຮຽນຜູ້ໃດຜູ້ໜຶ່ງ, ໃຫ້ຄູ...

ຄູ: ຂ້າພະເຈົ້າສົງໄສວ່າເປັນຫຍັງລີຢອນຈຶ່ງຕອບຄຳຖາມຖືກພຽງແຕ່ຂໍ້ດຽວ. ຂ້ອຍໝັ້ນໃຈວ່າລາວສາມາດເຮັດຫຼາຍກວ່ານັ້ນ!

ນັກຮຽນ ກ : ບາດກ້າວທຳອິດຂອງປະດິດໜວກແມ່ນຫຍັງ ?

ນັກຮຽນ ຂ : ຕັດກ່ອງນົມ ແລະ ແຜ່ອອກ.

ຄູ : ດີແລ້ວ, ນີ້ແມ່ນສິ່ງທີ່ເຈົ້າຂຽນໃສ່ປຶ້ມຂອງເຈົ້າບໍ ?

ນັກຮຽນ ຄ: ໂອ້! ຂ້ອຍຂຽນເອົາ B. ຂ້ອຍຈະປ່ຽນມາເປັນ A .

5. **ການໃຫ້ວຽກບ້ານ**

ການໃຫ້ວຽກບ້ານເປັນຮູບແບບໜຶ່ງ ເພື່ອປະເມີນການຮຽນຮູ້ຂອງນັກຮຽນ. ຖ້າວຽກການປະເມີນທີ່ໄດ້ຂຽນໄວ້ໃນບົດສອນ ຫາກເປັນກິດຈະກຳການຂຽນ ແມ່ນມອບໃຫ້ນັກຮຽນໄປເຮັດຢູ່ບ້ານ ແລ້ວໃຫ້ນັກຮຽນສົ່ງວຽກບ້ານໃນມື້ຕໍ່ມາ ຫຼື ໃນອາທິດຕໍ່ມາ. ນັກສຶກສາສາມາດໃຊ້ເກນປະເມີນແບບຮູບຣິກເພື່ອປະເມີນຜົນງານຂອງນັກຮຽນແຕ່ລະຄົນ.

ໃນເວລາທີ່ມອບວຽກບ້ານໃຫ້ນັກຮຽນຕ້ອງຮັບປະກັນວ່າ:

- ໃຫ້ຄຳແນະນຳວິທີການເຮັດວຽກບ້ານ.
- ກວດຄືນວ່ານັກຮຽນເຂົ້າໃຈວ່າຕົນເອງຕ້ອງເຮັດຫຍັງ.

- ກຳນົດເວລາຢ່າງລະອຽດເພື່ອສົ່ງວຽກບ້ານ.
- ໃນເວລາທີ່ນັກຮຽນສົ່ງວຽກບ້ານໃຫ້ໃຊ້ເວລາພັກທ່ຽງ ຫຼື ເວລາຫຼັງເລີກຮຽນໃຊ້ເກນປະເມີນແບບຮູບຣິກປະເມີນຜົນງານຂອງນັກຮຽນ ແລະ ໃຫ້ຄະແນນພວກເຂົາ.
- ສົ່ງຄືນວຽກບ້ານຂອງນັກຮຽນພາຍຫຼັງທີ່ກວດແລ້ວ ແລະ ໃຫ້ຄຳເຫັນຕໍ່ກັບນັກຮຽນ ຕົວຢ່າງ, ຊົມເຊີຍນັກຮຽນສຳລັບສິ່ງທີ່ພວກເຂົາເຮັດໄດ້ດີ ແລະ ໃຫ້ຄຳແນະນຳຕໍ່ກັບວິທີທີ່ພວກເຂົາຈະປັບປຸງການຮຽນຂອງພວກເຂົາໃຫ້ດີຂຶ້ນ.

## III. ການວັດ ແລະ ປະເມີນຜົນທີ່ລົງເລິກເຖິງບົດບາດຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ

ການວັດ ແລະ ປະເມີນຜົນເປັນພາກທີ່ສຳຄັນຂອງການຮຽນຮູ້ຂອງນັກຮຽນທັງໝົດ ເຊິ່ງກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ, ຊົນຊາດຊົນເຜົ່າ, ພື້ນຖານທາງສັງຄົມ ລວມເຖິງຄວາມຫຍຸ້ງຍາກທາງຮ່າງກາຍ. ເຖິງແນວໃດກໍຕາມ. ສິ່ງທີ່ສຳຄັນກໍຄືຄູສອນຕ້ອງມີຄວາມເຂົ້າໃຈຕໍ່ກັບຄວາມແຕກຕ່າງຂອງນັກຮຽນແຕ່ລະຄົນ ແລະ ຈະບໍ່ໄດ້ປະເມີນນັກຮຽນໃນວິທີທີ່ເຮັດນັກຮຽນຄົນໃດຄົນໜຶ່ງເສຍປຽບ. ໃຫ້ປະຕິບັດຍຸດທະວິທີ / ວິທີການລຸ່ມນີ້

ໃນເວລາທີ່ປະເມີນນັກຮຽນ ເພື່ອຮັບປະກັນວ່ານັກສຶກສາໄດ້ດຳເນີນກການວັດ ແລະ ປະເມີນຜົນໃນຮູບແບບທີ່ເປັນທຳ ແລະ ມີລັກສະນະຮ່ວມທາງສັງຄົມ.

- ຖ້າຄວາມບົກຜ່ອງທາງຮ່າງກາຍຂອງນັກຮຽນຫາກເຮັດໃຫ້ພວກເຂົາເສຍປຽບໃນກິດຈະກຳການປະເມີນໃດໜຶ່ງກໍ່ບໍ່ປະເມີນພວກເຂົາ ( ຕົວຢ່າງ, ນັກຮຽນທີ່ມີຄວາມຫຍຸ້ງຍາກໃນການເຄື່ອນໄຫວບໍ່ຄວນຖືກປະເມີນ ໃນບົດຮຽນຕ່າງໆຂອງວິຊາພະລະສຶກສາ )
- ນັກຮຽນຜູ້ທີ່ເວົ້າພາສາລາວບໍ່ໄດ້ປານໃດ ອາດຈະມີຄວາມຫຍຸ້ງຍາກທີ່ຈະເຂົ້າໃຈຄຳແນະນຳຂອງຄູຮັບປະກັນວ່ານັກຮຽນຂອງຄູເຂົ້າໃຈກິດຈະກຳກ່ອນທີ່ຈະເລີ່ມດຳເນີນກິດຈະກຳ. ຕົວຢ່າງ,ໃຫ້ຄູເວົ້າຊ້າລົງ, ນຳໃຊ້ຄຳສັບທີ່ງ່າຍດາຍ, ຖາມຄຳຖາມກວດຄືນເພື່ອຮັບປະກັນວ່ານັກຮຽນຮູ້ແລ້ວວ່າຕົນເອງຈະຕ້ອງເຮັດຫຍັງ.
- ຫຼີກລຽງການຈັດລຳດັບນັກຮຽນ ເຊິ່ງອາດຈະເຮັດໃຫ້ນັກຮຽນເສຍຄວາມຮູ້ສຶກ ( ເສຍໃຈ ) ຈາກການທີ່ແຈ້ງພວກເຂົາວ່າ ພວກເຂົາເປັນໜຶ່ງໃນຈຳນວນນັກຮຽນທີ່ມີຜົນການຮຽນຕໍ່າ.
- ນັກຮຽນບາງຄົນອາດຈະຂາດທັກສະທາງສັງຄົມໃນການເຮັດວຽກກຸ່ມ. ໃຫ້ໃຊ້ເວລາໃນຊ່ວງພັກທ່ຽງ, ພັກຜ່ອນ ເຮັດກິດຈະກຳປະເມີນພວກເຂົາຕົວຕໍ່ຕົວ ເພື່ອປະເມີນພວກເຂົາຢ່າງເປັນທຳ.
- ຖ້ານັກສຶກສາຫາກສັງເກດໄດ້ວ່າ ຕະຫຼອດການປະເມີນເພື່ອປັບປຸງການຮຽນ ແລະ ເພື່ອສະຫຼຸບຜົນການຮຽນ ນັກຮຽນຈຳນວນໜຶ່ງຍັງມີບັນຫາ ( ຍັງບໍ່ທັນເຂົ້າໃຈ ) ໃຫ້ໃຊ້ເວລາເພີ່ມເຕີມຊ່ວຍເຫຼືອພວກເຂົາ ( ໃນຊ່ວງພັກຜ່ອນ, ພັກທ່ຽງ ຫຼື ຫຼັງເລີກຮຽນ ) ເພື່ອໃຫ້ພວກເຂົາຕາມບົດຮຽນຕໍ່ໆໄປທັນໝູ່.
- ຖ້ານັກຮຽນຊົນເຜົ່າຂອງຄູມີຄວາມຫຍຸ້ງຍາກໃນການອ່ານ ຮັບປະກັນວ່າໃນນາມທີ່ຄູເປັນຄູສອນຄູຕ້ອງໃຊ້ເວລາຊ່ວຍເຫຼືອນັກຮຽນດັ່ງກ່າວຢ່າງພຽງພໍ, ໃຫ້ພວກເຂົາຟັງຄູເວົ້າ,ໃຫ້ພວກເຂົາເວົ້າຕາມຫຼັງ, ມີຮູບພາບປະກອບເພື່ອຊ່ວຍເຫຼືອພວກເຂົາໃນການອ່ານ ແລະ ໃຫ້ເພື່ອນຂອງພວກເຂົາຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນຂະນະທີ່ປະເມີນພວກເຂົາ.

- ໃນເວລາທີ່ຕັ້ງຄຳຖາມ ຮັບປະກັນວ່າຄູສອນໄດ້ຊຸກຍູ້ນັກຮຽນຍິງ ແລະ ນັກຮຽນຊາຍຕອບຄຳຖາມຢ່າງເທົ່າທຽມກັນ. ຊຸກຍູ້ນັກຮຽນທີ່ບໍ່ມັກປາກ ຕອບຄຳຖາມຕື່ມ, ເອີ້ນຊື່ນັກຮຽນແທນການຊີ້ບົ່ງຕົວນັກຮຽນ.

## IV. ການຊ່ວຍເຫຼືອຄູຜ່ານກຸ່ມວັອດແອັບ

ສຳລັບໂຮງຮຽນທີ່ບໍ່ສາມາດລົງຕິດຕາມໄດ້ ຫຼື ທີ່ຄູຕ້ອງການຄວາມຊ່ວຍເຫຼືອເປັນພິເສດກ່ຽວກັບການປະເມີນ, ກໍສາມາດໃຫ້ການຊ່ວຍເຫຼືອຜ່ານກຸ່ມວັອດແອັບໄດ້, ເພື່ອຊ່ວຍເຫຼືອຄູກ່ຽວກັບການປະເມີນຜ່ານກຸ່ມວັອດແອັບໃຫ້ໄດ້ຮັບຜົນດີ, ຄວນປະຕິບັດຕາມບາດກ້າວດັ່ງຕໍ່ໄປນີ້.

- ສົ່ງຂໍ້ຄວາມຜ່ານທາງວັອດແອບເພື່ອຖາມຄູກ່ຽວກັບດ້ານໃດຂອງການປະເມີນທີ່ຄູເຫັນວ່າຍັງພົບຄວາມຫຍຸ້ງຍາກ ແລະ ຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ.
- ຊອກຫາຍຸດທະວິທີການປະເມີນຈາກພາກກ່ອນໜ້າຂອງໂມດູນເຊິ່ງຈະຊ່ວຍຄູໃນການແກ້ໄຂບັນຫາກ່ຽວກັບການປະເມີນທີ່ພວກເຂົາພົບພໍ້.
- ສື່ສານຍຸດທະວິທີຕ່າງໆໃຫ້ແກ່ຄູໂດຍການເຮັດຕາມວິທີການໃດໜຶ່ງຕໍ່ໄປນີ້:
    1. ກັອບປີ້ຍຸດທະວິທີໃສ່ວັອດແອບ ແລະ ສົ່ງເປັນຂໍ້ຄວາມຂຽນ
    2. ຖ່າຍຮູບທີ່ຈະແຈ້ງຂອງຍຸດທະວິທີທີ່ແທດເໝາະ ແລະ ສົ່ງທາງວັອດແອັບໄປໃຫ້ຄູ
    3. ບັນທຶກສຽງຂອງຄູເອງໃນເວລາອ່ານຍຸດທະວິທີ ແລະ ສົ່ງເປັນຂໍ້ຄວາມສຽງທາງວັອດແອບໃຫ້ແກ່ຄູ.
    4. ຂຽນຂໍ້ຄວາມຫາຄູເພື່ອນັດເວລາໂທລົມກັນ ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈຍຸດທະວິທີທີ່ແທດເໝາະ
- ຕິດຕາມກັບຄູວ່າພວກເຂົາມີຄຳຖາມຫຍັງບໍ່ກ່ຽວກັບຍຸດທະວິທີຕ່າງໆ ຫຼື ກ່ຽວກັບການປະເມີນໂດຍລວມ. ຊຸກຍູ້ໃຫ້ຄູລອງນຳໃຊ້ຍຸດທະວິທີດັ່ງກ່າວໃນຫ້ອງຮຽນຂອງພວກເຂົາ.
- ຕິດຕາມກັບຄູໃນພາຍຫຼັງ ເພື່ອເບິ່ງຄືນວ່າຄູໄດ້ນຳໃຊ້ຍຸດທະວິທີຕ່າງໆແນວໃດແດ່.